**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ　　　　　　　　　　ເລກທີ 142---- /ສສກ

ຄະນະກຳມາທິການແຫ່ງຊາດ　　　　　　ນະຄອນຫຼວງວຽງຈັນ, ວັນທີ 07 ກຸມພາ 2018

ເພື່ອການພັດທະນາຊັບພະຍາກອນມະນຸດ

# ມະຕິ

## ກອງປະຊຸມຄັ້ງທີ VI ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມຄັ້ງທີ VI ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ໄຂຂຶ້ນ ໃນວັນພະຫັດ ວັນທີ 28 ທັນວາ 2017 ທີ່ຫ້ອງປະຊຸມໃຫຍ່ຂອງຄະນະເສດຖະສາດ, ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ໂດຍມີບັນດາທ່ານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະ ຍາກອນມະນຸດ ແລະ ກຳມະການພັດທະນາຊັບພະຍາກອນມະນຸດຂອງບັນດາກະຊວງ, ອົງການທຽບເທົ່າ, ຂັ້ນແຂວງ-ນະຄອນຫຼວງ (ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງເປັນກອງເລຂາ), ຄະນະຮັບຜິດຊອບ ແລະ ຜູ້ແທນກອງປະຊຸມເຂົ້າຮ່ວມທັງໝົດ 236 ທ່ານ (ຍິງ 41 ທ່ານ). ກອງປະຊຸມໄດ້ຮັບຟັງລາຍງານ ແລະ ຮັບຮູ້ກ່ຽວກັບ 1). ການສະຫຼຸບລາຍງານການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ປະຈຳປີ 2017 ແລະ ແຜນການປະຈຳປີ 2018, 2). ຄວາມຄືບໜ້າກ່ຽວກັບການແຕ່ງຕັ້ງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະກຳມະການພັດທະນາຊັບພະຍາກອນມະນຸດຊຸດໃໝ່ ແລະ 3). ການລາຍງານຜົນໄດ້ຮັບຈາກກອງປະຊຸມໂຕະມົນ ໃນຫົວຂໍ້: **"ການລົງທຶນໃສ່ການພັດທະນາສີມືແຮງງານ ເຊິ່ງເປັນປັດໃຈຕົ້ນຕໍຂອງການພັດທະນາຊັບພະຍາກອນມະນຸດ"** ຕໍ່ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນ ຂອງບັນດາທ່ານຜູ້ແທນຕໍ່ກັບບັນຫາທີ່ຍົກຂຶ້ນໃນກອງປະຊຸມ, ກອງປະຊຸມໄດ້ມີຄວາມເປັນເອກະພາບຮັບຮອງເອົາເປັນມະຕິກອງປະຊຸມ ດັ່ງນີ້:

1. ມອບໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງແຕ່ລະພາກສ່ວນທັງຂັ້ນສູນກາງ ແລະ ທ້ອງຖິ່ນ ສືບຕໍ່ສ້າງແຜນຄວາມຕ້ອງການບຸກຄະລາກອນ ແລະ ກຳລັງແຮງງານ ແຕ່ໄລຍະນີ້ເຖິງປີ 2025 ໃຫ້ສຳເລັດພາຍໃນປີ 2018 ໂດຍສົມທົບກັບກັບກອງເລຂາ ຄຊພຊ, ກະຊວງສຶກສາທິການ ແລະ ກິລາ;

2. ໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດໃນປີ 2018 ແມ່ນມອບໃຫ້ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ຊີ້ນຳຄະນະກຳມະການພັດທະນາຊັບພະຍາກອນມະນຸດຂອງແຕ່ລະພາກສ່ວນ ທັງຂັ້ນສູນກາງ ແລະ ທ້ອງຖິ່ນໂດຍສົມທົບກັນກັບກອງເລຂາ ຄຊພຊ, ກະຊວງສຶກສາທິການ ແລະ ກິລາ ປະຕິບັດດັ່ງນີ້:

   2.1 ສືບຕໍ່ເຜີຍແຜ່ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ໃຫ້ແກ່ບຸກຄະລາກອນ ຂອງຄະນະກຳມະການພັດທະນາຊັບພະຍາກອນມະນຸດ (ສູນກາງ ແລະ ທ້ອງຖິ່ນ) ໃຫ້ທົ່ວເຖິງ.

   2.2 ຜັນຂະຫຍາຍຜົນໄດ້ຮັບຂອງກອງປະຊຸມໂຕະມົນ ປະຈຳປີ 2017 ກ່ຽວກັບ **"ການລົງທຶນໃສ່ການພັດທະນາສີມືແຮງງານ ເຊິ່ງເປັນປັດໃຈສຳຄັນໃນການພັດທະນາຊັບພະຍາກອນມະນຸດ"** ໂດຍສ້າງເປັນແຜນງານ, ໂຄງການ ແລະ ແຜນການ-ກິດຈະກຳ ເພື່ອກຳນົດທິດທາງການວາງແຜນກຳລັງແຮງງານ ຮ່ວມກັບຄະນະກຳມະການທຸກພາກສ່ວນ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງ.

   2.3 ສືບຕໍ່ຮ່ວມເຮັດວຽກໃນການຄິດໄລ່ງົບປະມານທີ່ບໍ່ທັນມີໃນແຜນປະຕິບັດງານ ປີ 2016-2020 ທີ່ມີຄວາມເປັນໄປໄດ້, ແລະ ສ້າງລະບົບການຕິດຕາມ ແລະ ປະເມີນຜົນ.

   2.4 ສົມທົບກັບກະຊວງການເງິນຂຶ້ນແຜນງົບປະມານຂອງລັດຮ່ວມກັນ ໃນການສົ່ງເສີມ ແລະ ກໍ່ສ້າງຊັບພະຍາກອນມະນຸດໃນຂະແໜງ ແລະ ສາຂາວິຊາທີ່ມີຄວາມຈຳເປັນ ພາຍຫຼັງທີ່ສຳເລັດການກຳນົດຄວາມຕ້ອງການພັດທະນາຊັບພະຍາກອນມະນຸດຂັ້ນສູນກາງ ແລະ ຂັ້ນແຂວງລະອຽດແລ້ວສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ.

   2.5 ເຮັດວຽກກັບບັນດາຄູ່ຮ່ວມພັດທະນາທີ່ໃຫ້ການສະໜັບສະໜູນການພັດທະນາຊັບພະຍາກອນມະນຸດ ທັງພາຍໃນປະເທດ ແລະ ຕ່າງປະເທດ ເພື່ອຂົນຂວາຍການສະໜັບສະໜູນດ້ານວິຊາການ ແລະ ງົບປະມານ ມາຈັດຕັ້ງປະຕິບັດຍຸດທະສາດ.

3. ກອງປະຊຸມຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດຄັ້ງທີ VII ຈະຈັດຂຶ້ນໃນເດືອນທັນວາ 2018.

4. ມອບໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຂອງການຈັດຕັ້ງໃໝ່ນີ້ຮ່ວມມືກັນຢ່າງຕັ້ງໜ້າ ດ້ວຍຄວາມເອົາໃຈໃສ່ ແລະ ຮັບຜິດຊອບສູງໃນການສ້າງ ແລະ ປະຕິບັດແຜນພັດທະນາຊັບພະຍາກອນມະນຸດຂອງຕົນໃຫ້ໄປຕາມຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ**

**ປະທານຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ**

ບ.ແສງເດືອນ **ຫຼ້າຈັນທະບູນ**